STATE OF IOWA DEPARTMENT OF
Health AND Human
SERVICES

Kim Reynolds
GOVERNOR

Adam Gregg
LT. GOVERNOR

Kelly Garcia
DIRECTOR

ວັນທີ: ມັງກອນ 2023
ເຖິງ: ພໍ່ແມ່/ຜູ້ປົກຄອງຂອງນັກຮຽນຊັ້ນອະນຸບານ (Kindergartner)
ຈາກ: Rossany Brugger, ຜູ້ປະສານງານໂຄງການກວດທາດຊືນໃນເລືອດແບບບັງຄັບ (Mandatory Blood Lead Testing Program Coordinator)
ຫົວຂໍ້: ລູກຂອງທ່ານອາດຈຳເປັນຕ້ອງໄດ້ກວດຫາທາດຊືນແບບບັງຄັບ

ທ່ານໄດ້ຮັບການສື່ສານນີ້ເພາະວ່າລູກຂອງທ່ານຢູ່ໃນໂຮງຮຽນອະນຸບານອາດຈະບໍ່ໄດ້ຮັບການກວດຫານ້ຳຕານໃນເລືອດຕາມບັນທຶກຂອງພະແນກສຸຂະພາບແລະການບໍລິການມະນຸດຂອງລັດໄອໂອວາ. ຖ້າລູກຂອງທ່ານໄດ້ກວດລະດັບນ້ຳຕານໃນເລືອດກ່ອນອາຍຸ 6 ປີ, ກະລຸນາລະເລີຍແຈ້ງການນີ້.

ຖ້າລູກຂອງທ່ານຍັງບໍ່ໄດ້ຮັບການກວດ, ກະລຸນາໃຫ້ລາວ ຫຼື ນາງກວດທາດຊືນໃນເລືອດທັນທີທີ່ເປັນໄປໄດ້. ແຜນປະກັນ Medicaid, Hawk-i ແລະ ອີກຫຼາຍໆແຜນປະກັນຈະຈ່າຍຄ່າການກວດທາດຊືນໃນເລືອດ. ຖ້າທ່ານບໍ່ມີວິທີຈ່າຍຄ່າການກວດນີ້ ແລະ ລູກຂອງທ່ານມີອາຍຸ 5 ປີລົງມາ, ກະລຸນາຕິດຕໍ່ຫາພະແນກຂອງພວກເຮົາ ຫຼື ໜ່ວຍງານສາທາລະນະສຸກປະຈຳທ້ອງຖິ່ນຂອງທ່ານເພື່ອຊ່ວຍທ່ານໃນການລະບຸສະຖານທີ່ໃຫ້ລູກຂອງທ່ານໄດ້ຮັບການກວດທາດຊືນໃນເລືອດ.

ການເກີດເປັນພິດຂອງທາດຊືນຢູ່ໃນເດັກນ້ອຍລັດໄອໂອວາເກີດຂຶ້ນ ແລະ ປົກກະຕິແມ່ນເຊື່ອມໂຍງກັບບັນຫາການຮຽນຮູ້. ການໄດ້ຮັບການກວດທາດຊືນໃນເລືອດແມ່ນເປັນພຽງວິທີດຽວທີ່ຈະລະບຸວ່າລູກຂອງທ່ານເກີດເປັນພິດຈາກທາດຊືນບໍ່.

ໃນປີ 2008, ລັດໄອໂອວາ (State of Iowa) ໄດ້ຜ່ານກົດໝາຍວ່າດ້ວຍການກວດທາດຊືນໃນເລືອດແບບບັງຄັບ (Mandatory Blood Lead Testing) ທີ່ຕ້ອງການໃຫ້ເດັກນ້ອນທຸກຄົນທີ່ເຂົ້າໂຮງຮຽນອະນຸບານໄດ້ມີການກວດທາດຊືນໃນເລືອດຢ່າງໜ້ອຍໜຶ່ງຄັ້ງ. ສຳລັບຂໍ້ມູນເພີ່ມເຕີມແມ່ນມີຢູ່ທີ່ https://idph.iowa.gov/Portals/1/Files/LPP/Chapter.641.67.pdf

ຖ້າທ່ານມີຄຳຖາມ ແລະ/ຫຼື ຂໍ້ຂ້ອງໃຈ, ກະລຸນາຕິດຕໍ່ຫາຂ້າພະເຈົ້າໄດ້.

ດ້ວຍຄວາມຮັກແພງ,

Rossany Brugger
ພະແນກສຸຂະພາບ ແລະການບໍລິການມະນຸດຂອງລັດໄອໂອວາ
ໂຄງການປ້ອງກັນການເກີດເປັນພິດຈາກທາດຊືນ (Lead Poisoning Prevention Program)
321 E. 12th Street
Des Moines, IA 50319
ໂທລະສັບ: (515) 281-3225
ແຟັກ: (515) 281-4529
rossany.brugger@idph.iowa.gov